ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 006 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 06 APR 2020

# ຂໍ້ຕົກລົງ
# ວ່າດ້ວຍການເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 195/ນຍ, ລົງວັນທີ 12 ມິຖຸນາ 2017;
- ອີງຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 007/ສຄຄຊ, ລົງວັນທີ 19 ມີນາ 2020.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ແນໃສ່ສົ່ງເສີມ ແລະ ອຳນວຍຄວາມສະດວກ ການຊື້ ຂາຍຮຸ້ນ ຂອງຜູ້ລົງທຶນຕ່າງປະເທດ, ຮັບປະກັນໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີປະສິດທິພາບ, ໝັ້ນຄົງ, ໂປ່ງໃສ, ຍຸຕິທຳ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ.

### ມາດຕາ 2 ການນຳເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ

ການເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ແມ່ນການເອົາຮຸ້ນທີ່ຈົດທະບຽນຊື້ ຂາຍ ຢູ່ຕະຫຼາດຫຼັກຊັບຂອງ ສປປ ລາວ ເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດແລ້ວນຳເອົາໃບຢັ້ງຢືນສິດດັ່ງກ່າວ ຂາຍໃຫ້ແກ່ຜູ້ລົງທຶນຢູ່ຕ່າງປະເທດ.

### ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງຕໍ່ໄປນີ້:

1. **ຮຸ້ນອ້າງອີງ** ໝາຍເຖິງ ຮຸ້ນທີ່ຈົດທະບຽນຊື້ ຂາຍ ຢູ່ຕະຫຼາດຫຼັກຊັບຂອງ ສປປ ລາວ ທີ່ຖືກນຳໄປອ້າງອີງເພື່ອອອກໃບຢັ້ງຢືນສິດ;
2. **ໃບຢັ້ງຢືນສິດ** ໝາຍເຖິງ ເອກະສານຢັ້ງຢືນສິດໃນຮຸ້ນອ້າງອີງ ທີ່ຜູ້ຖືຄອງມີສິດໄດ້ຮັບເງິນປັນຜົນ ຫຼື ສິດອື່ນໆ ຕາມການຕົກລົງລະຫວ່າງຜູ້ອອກຈຳໜ່າຍ ແລະ ຜູ້ຖືຄອງໃບຢັ້ງຢືນສິດ;
3. **ຜູ້ລົງທຶນປະເພດສະຖາບັນ** ໝາຍເຖິງ ຜູ້ລົງທຶນຕ່າງປະເທດທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ຊື້ຮຸ້ນທີ່ຈົດທະບຽນຊື້ ຂາຍ ຢູ່ຕະຫຼາດຫຼັກຊັບຂອງ ສປປ ລາວ ເພື່ອນຳໄປເປັນຮຸ້ນອ້າງອີງ ໃນການອອກໃບຢັ້ງຢືນສິດ ໃຫ້ແກ່ຜູ້ລົງທຶນຕ່າງປະເທດ. ຜູ້ລົງທຶນປະເພດສະຖາບັນດັ່ງກ່າວ ໃຫ້ຖືວ່າເປັນຜູ້ລົງທຶນລາຍໜຶ່ງ ມີສິດ ແລະ ພັນທະຄືກັບຜູ້ລົງທຶນລາຍອື່ນ;
4. **ຜູ້ຖືຄອງໃບຢັ້ງຢືນສິດ** ໝາຍເຖິງ ຜູ້ລົງທຶນຕ່າງປະເທດ ທີ່ຊື້ໃບຢັ້ງຢືນສິດຢູ່ຕະຫຼາດຫຼັກຊັບຕ່າງປະເທດ;
5. **ໃບຮັບຮູ້** ໝາຍເຖິງ ເອກະສານອະນຸຍາດໃຫ້ຜູ້ລົງທຶນປະເພດສະຖາບັນ ເພື່ອນຳເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ລົງທຶນປະເພດສະຖາບັນ, ທະນາຄານດູແລຊັບສິນ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການເອົາຮຸ້ນເປັນຮຸ້ນອ້າງອີງ ເພື່ອອອກໃບຢັ້ງຢືນສິດ.

## ໝວດທີ 2
## ການເອົາຮຸ້ນເປັນຮຸ້ນອ້າງອີງເພື່ອການອອກໃບຢັ້ງຢືນສິດ

**ມາດຕາ 5 ການເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ**

ຮຸ້ນທີ່ສາມາດນຳໃຊ້ເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ຕ້ອງເປັນຮຸ້ນທີ່ຈົດທະບຽນຊື້ ຂາຍ ຢູ່ຕະຫຼາດຫຼັກຊັບຂອງ ສປປ ລາວ.

ຜູ້ທີ່ມີຈຸດປະສົງເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ຕ້ອງໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 6 ເງື່ອນໄຂຂອງຜູ້ທີ່ສາມາດຊື້ຮຸ້ນໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ**

ຜູ້ທີ່ມີຈຸດປະສົງຊື້ຮຸ້ນທີ່ຈົດທະບຽນຊື້ ຂາຍ ຢູ່ຕະຫຼາດຫຼັກຊັບຂອງ ສປປ ລາວ ໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ລົງທຶນປະເພດສະຖາບັນ ທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານຫຼັກຊັບ ຂອງຕ່າງປະເທດ ໃຫ້ເປັນຜູ້ອອກ ແລະ ຂາຍໃບຢັ້ງຢືນສິດ. ອົງການຄຸ້ມຄອງວຽກງານຫຼັກຊັບດັ່ງກ່າວ ຕ້ອງເປັນສະມາຊິກຂອງ ອົງການຄຸ້ມຄອງຫຼັກຊັບສາກົນ (IOSCO);
2. ໜັງສືຊວນຊື້ ຕ້ອງເປັນສະບັບລ່າສຸດທີ່ຍື່ນຕໍ່ ອົງການຄຸ້ມຄອງວຽກງານຫຼັກຊັບຂອງປະເທດຕົນເອງ;
3. ມີບັນຊີຊື້ ຂາຍຮຸ້ນຢູ່ບໍລິສັດຫຼັກຊັບ ໃດໜຶ່ງ ທີ່ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

4. ມີສັນຍາ ກ່ຽວກັບການເກັບຮັກສາ ແລະ ຄຸ້ມຄອງຮຸ້ນ ກັບທະນາຄານດູແລຊັບສິນໃດໜຶ່ງ ທີ່ໄດ້ຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
5. ເງື່ອນໄຂອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 7 ເອກະສານປະກອບ**

ຜູ້ລົງທຶນປະເພດສະຖາບັນ ທີ່ມີຈຸດປະສົງຊື້ຮຸ້ນທີ່ຈົດທະບຽນຊື້ ຂາຍ ຢູ່ ຕະຫຼາດຫຼັກຊັບຂອງ ສປປ ລາວ ໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ໃບອະນຸຍາດໃຫ້ເປັນຜູ້ອອກໃບຢັ້ງຢືນສິດຈາກອົງການຄຸ້ມຄອງວຽກງານຫຼັກຊັບຂອງຕ່າງປະເທດ;
3. ໃບອະນຸຍາດໃຫ້ຂາຍໃບຢັ້ງຢືນສິດ ຈາກອົງການຄຸ້ມຄອງວຽກງານຫຼັກຊັບຂອງຕ່າງປະເທດ;
4. ສໍາເນົາໜັງສືຊວນຊື້;
5. ສໍາເນົາສັນຍາແຕ່ງຕັ້ງນາຍໜ້າຊື້ ຂາຍຮຸ້ນກັບບໍລິສັດຫຼັກຊັບ ຢູ່ ສປປ ລາວ ;
6. ສໍາເນົາສັນຍາ ກ່ຽວກັບການເກັບຮັກສາ ແລະ ຄຸ້ມຄອງຮຸ້ນ ກັບທະນາຄານດູແລຊັບສິນ ຢູ່ ສປປ ລາວ;
7. ເອກະສານອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ສໍາລັບຜູ້ລົງທຶນປະເພດສະຖາບັນ ທີ່ມີຈຸດປະສົງຊື້ຮຸ້ນເພີ່ມ ເພື່ອອອກໃບຢັ້ງຢືນສິດເພີ່ມ ຕ້ອງປະກອບເອກະສານເພີ່ມເຕີມ ຕາມວັກໜຶ່ງ ຂໍ້ 4 ແລະ 5 ຂອງມາດຕານີ້.

**ມາດຕາ 8 ການພິຈາລະນາ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການອອກໃບຢັ້ງຢືນການຮັບຮູ້ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພາຍໃນ ສາມວັນລັດຖະການ.

**ມາດຕາ 9 ອັດຕາສ່ວນຮຸ້ນທີ່ເອົາໄປເປັນຮຸ້ນອ້າງອີງ**

ຮຸ້ນຂອງບໍລິສັດຈົດທະບຽນໃດໜຶ່ງ ສາມາດເອົາໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ຕ້ອງບໍ່ເກີນສິບສ່ວນຮ້ອຍ ຂອງຮຸ້ນຈົດທະບຽນທັງໝົດຂອງບໍລິສັດ. ຜູ້ລົງທຶນປະເພດສະຖາບັນໜຶ່ງລາຍ ສາມາດຊື້ຮຸ້ນຂອງບໍລິສັດຈົດທະບຽນໃດໜຶ່ງໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ໄດ້ບໍ່ເກີນ ຫ້າສ່ວນຮ້ອຍ ຂອງຮຸ້ນຈົດທະບຽນທັງໝົດຂອງບໍລິສັດ.

**ມາດຕາ 10 ການເກັບຮັກສາ, ການຄຸ້ມຄອງ ແລະ ການຊື້ ຂາຍຮຸ້ນ ເພື່ອເປັນຮຸ້ນອ້າງອີງ**

ຮຸ້ນທີ່ຊື້ໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ຕ້ອງເກັບຮັກສາ ແລະ ຄຸ້ມຄອງ ໂດຍທະນາຄານດູແລຊັບສິນ ທີ່ໄດ້ຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ການຊື້ ຂາຍຮຸ້ນດັ່ງກ່າວ ໃຫ້ປະຕິບັດຕາມກົນໄກ ແລະ ລະບຽບການທີ່ກ່ຽວຂ້ອງ. ໃນກໍລະນີຂາຍ ແມ່ນບໍ່ໃຫ້ກະທົບຕໍ່ລາຄາຮຸ້ນດັ່ງກ່າວໃນຕະຫຼາດຫຼັກຊັບຂອງ ສປປ ລາວ.

**ມາດຕາ 11 ພັນທະລາຍງານຂອງຜູ້ລົງທຶນປະເພດສະຖາບັນ**

ຜູ້ລົງທຶນປະເພດສະຖາບັນ ມີພັນທະລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1) ຈຳນວນຮຸ້ນທີ່ໄດ້ຮັບອະນຸຍາດໃຫ້ຊື້ ເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ;
2) ຈຳນວນຮຸ້ນທີ່ຊື້ໄດ້ຕົວຈິງ;
3) ຈຳນວນຮຸ້ນທີ່ນຳໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ;
4) ມູນຄ່າຕະຫຼາດຂອງໃບຢັ້ງຢືນສິດ.

ການລາຍງານ ຕ້ອງລາຍງານຢ່າງເປັນລາຍລັກອັກສອນ ໂດຍຜ່ານຊ່ອງທາງເອເລັກໂຕຣນິກ ແລະ ຕ້ອງນຳສົ່ງພາຍໃນ ວັນທີ 30 ຂອງທຸກໆ ເດືອນ.

**ມາດຕາ 12 ພັນທະຂອງທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ທີ່ເຮັດໜ້າທີ່ເກັບຮັກສາ ແລະ ຄຸ້ມຄອງຮຸ້ນ ທີ່ນຳໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ຕ້ອງລາຍງານຈຳນວນຮຸ້ນ ທີ່ຜູ້ລົງທຶນປະເພດສະຖາບັນຝາກໄວ້ນຳຕົນ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນວັນທີ 30 ຂອງທຸກໆ ເດືອນ.

## ໝວດທີ 3
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 13 ຂໍ້ຫ້າມ**

ຫ້າມ ຜູ້ລົງທຶນປະເພດສະຖາບັນ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຊື້ຮຸ້ນທີ່ຈົດທະບຽນຊື້ ຂາຍ ຢູ່ຕະຫຼາດຫຼັກຊັບຂອງ ສປປ ລາວ ໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ໂດຍບໍ່ໄດ້ຮັບຮູ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ເອົາຮຸ້ນ ໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ ເກີນອັດຕາສ່ວນທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດ;
3. ເກັບຮັກສາ ແລະ ຄຸ້ມຄອງຮຸ້ນອ້າງອີງ ບໍ່ສອດຄ່ອງຕາມລະບຽບການທີ່ກ່ຽວຂ້ອງ;
4. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 14 ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ລົງທຶນປະເພດສະຖາບັນ, ທະນາຄານດູແລຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ມີຜົນງານດີເດັ່ນໃນການປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

**ມາດຕາ 15 ມາດຕະການຕໍ່ຜູ້ລະເມີດ**

ຜູ້ລົງທຶນປະເພດສະຖາບັນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ປະກາດຕໍ່ມວນຊົນ ແລະ ຖອນໃບຮັບຮູ້. ໃນກໍລະນີລະເມີດຮ້າຍແຮງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະບໍ່ພິຈາລະນາອອກໃບຮັບຮູ້ໃຫ້.

ທະນາຄານດູແລຊັບສິນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຕາມລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ລົງທຶນປະເພດສະຖາບັນ, ທະນາຄານດູແລຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ປະທານ

ສົມດີ ດວງດີ